ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ຄະນະນຳຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຮອງເຈົ້າແຂວງ

## ພົບປະເຮັດວຽກກັບ ຜູ້ບໍລິຫານຂອງ ທະນາຄານ BIDV ສສ. ຫວຽດນາມ



ຄະນະນຳ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຮອງເຈົ້າແຂວງ ພົບປະເຮັດວຽກກັບ ຜູ້ບໍລິຫານຂອງ ທະນາຄານ BIDV ສສ. ຫວຽດນາມ ໃນວັນທີ 24 ກໍລະກົດ 2023 ທີ່ສຳນັກງານໃຫຍ່ ຂອງ ທະນາຄານ BIDV ສສ. ຫວຽດນາມ. ຈຸດປະສົງຂອງການພົບປະຄັ້ງນີ້ແມ່ນເພື່ອແລກປ່ຽນບົດຮຽນການມີສ່ວນຮ່ວມຂອງທະນາຄານດັ່ງກ່າວໃນການພັດທະນາຕະຫຼາດການເງິນ ເນື່ອງຈາກເປັນທະນາຄານອັນດັບຫນຶ່ງຂອງ ສສ. ຫວຽດນາມ, ພ້ອມດຽວກັນນີ້, ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ເນັ້ນບາງບັນຫາສຳຄັນໃຫ້ແກ່ທະນາຄານ BIDV ຫວຽດນາມ ເພື່ອເປີດໂອກາດການລົງທຶນຂອງທະນາຄານດັ່ງກ່າວຢູ່ ສປປ ລາວ ໃນຂະແໜງຫຼັກຊັບ ໃຫ້ມີການພັດທະນາຫຼາຍຂຶ້ນກວ່າເກົ່າ, ເພີ່ມຊ່ອງທາງຮັ່ງມີໃຫ້ປະຊາຊົນລາວ ໄດ້ມີທາງເລືອກໃນການລົງທຶນ ໂດຍອີງໃສ່ບົດຮຽນຂອງ ສສ. ຫວຽດນາມ.

**# ຂ່າວ - ພາບ: ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.**

http://www.lsc.gov.la/news/viewnews.php?cid=320

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**